ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນພັດທະນາ
# ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ
# ປີ 2019-2020

# ຄຳນຳ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (ປີ 2016-2020) ແລະ ຍຸດທະສາດການພັດທະນາອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ (ປີ 2011-2020) ໄດ້ກຳນົດເປົ້າໝາຍການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພື່ອປະກອບສ່ວນ ຊຸກຍູ້ໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ, ມີຄຸນນະພາບ ແລະ ສາມາດເຊື່ອມໂຍງກັບສາກົນໄດ້, ສ້າງວຽກເຮັດງານທຳ ແລະ ລາຍໄດ້ໃຫ້ແກ່ປະຊາຊົນ, ເອົາໃຈໃສ່ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ມີທ່າແຮງດ້ານພື້ນຖານວັດຖຸດິບພາຍໃນ ແລະ ສົ່ງເສີມການປຸງແຕ່ງສ້າງມູນຄ່າເພີ່ມ ເປັນຕົ້ນອຸດສາຫະກຳປຸງແຕ່ງຜະລິດຕະພັນຈາກກະສິກຳ-ປ່າໄມ້, ອຸດສາຫະກຳປຸງແຕ່ງຈາກແຮ່ທາດ (ໂລຫະ ແລະ ອະໂລຫະ) ແລະ ຫັດຖະກຳ ພ້ອມທັງຊຸກຍູ້ສົ່ງເສີມ ແລະ ລະດົມໃຫ້ທຸກພາກສ່ວນລົງທຶນໃນການພັດທະນາເຂດ ແລະ ນິຄົມອຸດສາຫະກຳ ເພື່ອເປັນພື້ນຖານຮອງຮັບ ແລະ ສາມາດດຶງດູດເອົາການລົງທຶນໃນອຸດສາຫະກຳປຸງແຕ່ງໃຫ້ນັບມື້ນັບຫລາຍຂຶ້ນ.

ສູ້ຊົນໃຫ້ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຂະຫຍາຍຕົວໃນອັດຕາສະເລ່ຍ 12% ຕໍ່ປີ ເພື່ອສ້າງພື້ນຖານ ແລະ ເງື່ອນໄຂອັນຈຳເປັນປະກອບສ່ວນໃຫ້ການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມເຂັ້ມແຂງຕາມທິດສີຂຽວ ແລະ ຍືນຍົງ.

ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສ້າງແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2019-2020 ສະບັບນີ້ຂຶ້ນ ເພື່ອເປັນທິດທາງ ແລະ ບ່ອນອີງໃນການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ສອດຄ່ອງກັບແນວທາງປ່ຽນແປງໃໝ່ຂອງພັກ, ສະພາບຄວາມເປັນຈິງ ແລະ ຈຸດພິເສດທ່າແຮງຂອງປະເທດ.

ນະຄອນຫຼວງວຽງຈັນ, ວັນທີ 20 SEP 2019

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

# ກະຊວງອຸດສາຫະກຳ ແລະ ການຄ້າ
# ພຶດສະພາ 2019

## 1. ພາກສະເໜີ

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (ປີ 2016-2020) ກຳນົດຄາດໝາຍສູ້ຊົນເພື່ອເຮັດໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ມີຄຸນນະພາບ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໂດຍຖືເອົາການພັດທະນາຂະແໜງກະສິກຳ-ປ່າໄມ້ ຕິດພັນກັບອຸດສາຫະກຳ ແລະ ການບໍລິການ ຢ່າງແຂງແຮງ ແລະ ມີຈຸດສຸມ, ເສີມຂະຫຍາຍກຳລັງແຮງຂອງທຸກພາກສ່ວນເສດຖະກິດ ແລະ ການພົວພັນຮ່ວມມືກັບຕ່າງປະເທດຢ່າງແຂງແຮງ. ສຸມໃສ່ພັດທະນາເສດຖະກິດເປັນໃຈກາງ ທັງຮັບປະກັນໃຫ້ກົມກຽວກັບການຊຸກຍູ້ສົ່ງເສີມວຽກງານວັດທະນະທຳ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.

ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນຂະແໜງໜຶ່ງທີ່ສຳຄັນໃນໂຄງປະກອບເສດຖະກິດແຫ່ງຊາດ ທັງມີບົດບາດສຳຄັນໃນການຜະລິດເປັນສິນຄ້າອຸປະໂພກ-ບໍລິໂພກ ເພື່ອຕອບສະໜອງການຊົມໃຊ້ພາຍໃນ ແລະ ເພື່ອສົ່ງອອກ ຄ້ຳປະກັນຄວາມໝັ້ນຄົງໃນການເຕີບໂຕ ແລະ ຄວາມມີສະຖຽນລະພາບຂອງເສດຖະກິດມະຫາພາກ, ສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບ ກໍຄືຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ປະກອບສ່ວນເຂົ້າໃນການປະຕິບັດຄາດໝາຍສູ້ຊົນຂອງລັດຖະບານ ເພື່ອໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ. ດັ່ງນັ້ນ, ແຜນພັດທະນາສະບັບນີ້ ຈຶ່ງໄດ້ຕີລາຄາກ່ຽວກັບການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແຕ່ປີ 2016-2018 ເພື່ອເປັນພື້ນຖານໃນການກຳນົດທິດທາງ, ຄາດໝາຍ, ເປົ້າໝາຍ ໂດຍຜັນຂະຫຍາຍເປັນແຜນວຽກ ແລະ ໂຄງການ ໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນທ້າຍສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ VIII.

## 2. ການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2016-2018

### 2.1 ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ

ຂະແໜງອຸດສາຫະກຳໂດຍລວມ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ປະກອບສ່ວນສຳຄັນ ຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສະແດງອອກ ຄື: ໃນປີ 2016 ຜົນຜະລິດອຸດສາຫະກຳ (ບໍ່ແຮ່ ແລະ ຂຸດຄົ້ນ, ອຸດສາຫະກຳປຸງແຕ່ງ, ພະລັງງານໄຟຟ້າ, ນ້ຳປະປາ-ບຳບັດສິ່ງເສດເຫຼືອ ແລະ ກໍ່ສ້າງ) ປະກອບສ່ວນ 28,76% ຂອງຍອດລວມຜະລິດຕະພັນພາຍໃນ (ລວມມີ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 7,77%) ສົມທຽບກັບສ່ວນແບ່ງຂອງຂະແໜງກະສິກຳ 17,23% ແລະ ບໍລິການ 42,48%. ໃນປີ 2018 ຄາດຄະເນການປະກອບສ່ວນຂອງອຸດສາຫະກຳເພີ່ມຂຶ້ນເປັນ 43,79%; ໃນນີ້, 9% ມາຈາກອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

ມາເຖິງປີ 2018 ຈຳນວນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ ມີທັງໝົດ 11.222 ໂຮງງານ; ໃນນີ້ ແບ່ງເປັນໂຮງງານຂະໜາດໃຫຍ່ 686 ໂຮງງານ, ຂະໜາດກາງ 1.027 ໂຮງງານ ແລະ ຂະໜາດນ້ອຍ 9.509 ໂຮງງານ. ນອກນັ້ນ ຍັງມີຫົວໜ່ວຍອຸດສາຫະກຳຂະໜາດນ້ອຍແບບຄອບຄົວ ຈຳນວນ 17.933

ຫົວໜ່ວຍ.[1] ດ້ານຮູບແບບຂອງການລົງທຶນ ປະກອບມີໂຮງງານທີ່ຄົນຕ່າງປະເທດເປັນເຈົ້າຂອງເງິນທຶນ 2,69% ແລະ ເປັນໂຮງງານທີ່ຮ່ວມລົງທຶນລະຫວ່າງຄົນລາວກັບຄົນຕ່າງປະເທດ 16,09% ໂດຍສ່ວນທີ່ເຫຼືອ 81,22% ແມ່ນຄົນລາວເປັນເຈົ້າຂອງ.

### 2.1.1 ຜົນຜະລິດ, ການສ້າງມູນຄ່າເພີ່ມ ແລະ ການສົ່ງອອກ

ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ມີຈັງຫວະການຂະຫຍາຍຕົວຢ່າງຕໍ່ເນື່ອງ, ລະຫວ່າງປີ 2016-2018 ມີອັດຕາການຂະຫຍາຍຕົວສະເລ່ຍ 8,24% ຕໍ່ປີ ແລະ ມູນຄ່າການຜະລິດບັນລຸໄດ້ 27.963 ຕື້ກີບ.[2] ໃນນັ້ນ, ອຸດສາຫະກຳປຸງແຕ່ງ ທີ່ມີການຜະລິດພົ້ນເດັ່ນ ແລະ ສ້າງມູນຄ່າເພີ່ມສູງ ເຊິ່ງກວມເອົາຫຼາຍກວ່າ 60% ຂອງມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳທັງໝົດຄື: ອຸດສາຫະກຳ ຜະລິດເບຍ, ນ້ຳຫວານອັດລົມ, ນ້ຳດື່ມ, ຕັດຫຍິບ , ຊີມັງ ແລະ ການຜະລິດໂລຫະຂັ້ນພື້ນຖານ ເປັນຕົ້ນ.

ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ມີຄວາມສາມາດໃນການສ້າງມູນຄ່າເພີ່ມ ສະເລ່ຍ 57,63%; ໃນນີ້, ອຸດສາຫະກຳຂະໜາດໃຫຍ່ ມີຄວາມສາມາດໃນການສ້າງມູນຄ່າເພີ່ມ 61,60%, ຮອງລົງມາແມ່ນອຸດສາຫະກຳຂະໜາດກາງ, ຂະໜາດນ້ອຍ ແລະ ແບບຄອບຄົວ ກວມ 60,98%, 47,43% ແລະ 43,78% ຕາມລຳດັບ. ອຸດສາຫະກຳ ທີ່ນຳໃຊ້ຊັບພະຍາກອນທຳມະຊາດ ມີຄວາມສາມາດໃນການສ້າງມູນຄ່າເພີ່ມຕ່ຳສຸດ ຄືພຽງແຕ່ 43,42%.[3]

ເຖິງແມ່ນວ່າໂຮງງານອຸດສາຫະກຳຂະໜາດໃຫຍ່ມີອັດຕາສ່ວນພຽງແຕ່ 5,43% ຂອງຈຳນວນໂຮງງານທັງໝົດ ແຕ່ໄດ້ສ້າງມູນຄ່າການຜະລິດໄດ້ເຖິງ 61,47%; ຈຳນວນໂຮງງານອຸດສາຫະກຳຂະໜາດກາງ, ຂະໜາດນ້ອຍ ແລະ ທຸລະກິດຂະໜາດນ້ອຍແບບຄອບຄົວ ກວມເອົາເຖິງ 94,57% ແຕ່ສ້າງມູນຄ່າການຜະລິດໄດ້ ພຽງແຕ່ 38,53%.

ອັດຕາສ່ວນຈຳນວນໂຮງງານ ແລະ ມູນຄ່າການຜະລິດ ສະແດງໃນຮູບ ລຸ່ມນີ້:







ແຫຼ່ງຂໍ້ມູນ : ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ອົງການ UNIDO (2018), ບົດລາຍງານການພັດທະນາອຸດສາຫະກຳ.

---

[1] ຫົວໜ່ວຍອຸດສາຫະກຳຂະໜາດນ້ອຍແບບຄອບຄົວ ມີກຳລັງແຮງຂອງເຄື່ອງຈັກ ຕ່ຳກວ່າ 10 ແຮງມ້າ ຫຼື ແຮງງານ ຕ່ຳກວ່າ 10 ຄົນ; ໂຮງງານຂະໜາດນ້ອຍ ມີກຳລັງແຮງຂອງເຄື່ອງຈັກ ແຕ່ 10 ຫາ 50 ແຮງມ້າ ຫຼື ແຮງງານ ແຕ່ 10 ຫາ 50 ຄົນ; ໂຮງງານຂະໜາດກາງ ມີກຳລັງແຮງຂອງເຄື່ອງຈັກ ແຕ່ 51 ຫາ 200 ແຮງມ້າ ຫຼື ແຮງງານ ແຕ່ 51 ຫາ 200 ຄົນ; ແລະ ໂຮງງານຂະໜາດໃຫຍ່ ມີ ກຳລັງແຮງຂອງເຄື່ອງຈັກ ແຕ່ 201 ແຮງມ້າ ຂຶ້ນໄປ ຫຼື ແຮງງານ ແຕ່ 201 ຄົນຂຶ້ນໄປ.

[2] ຄິດໄລ່ຈາກຂໍ້ມູນຂອງກົມອຸດສາຫະກຳ ແລະ ຫັດຖະກຳ.

[3] ຄວາມສາມາດໃນການສ້າງມູນຄ່າເພີ່ມ ວັດແທກຈາກມູນຄ່າເພີ່ມການຜະລິດ (Manufacturing Value Added) ຫານໃຫ້ຜົນຜະລິດລວມ (Gross Output).

ໃນໄລຍະປີ 2016-2018 ການສົ່ງອອກສິນຄ້າອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ຂະຫຍາຍຕົວສະເລ່ຍ 10,3% ຕໍ່ປີ ແລະ ມູນຄ່າການສົ່ງອອກບັນລຸໄດ້ 4,45 ຕື້ໂດລາສະຫະລັດ. ຕະຫຼາດສົ່ງອອກຕົ້ນຕໍແມ່ນໄປປະເທດໄທ, ສປ ຈີນ ແລະ ສສ ຫວຽດນາມ.

### 2.1.2 ຜະລິດຕະພາບ ແລະ ການຈ້າງງານ

ໃນປີ 2015, ຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ມີຜະລິດຕະພາບ[4] ເທົ່າກັບ 1,36 ຫຼື 136 ສ່ວນຮ້ອຍ; ໃນນີ້, ອຸດສາຫະກໍາເຄື່ອງດື່ມ ມີຜະລິດຕະພາບສູງສຸດ 6,30; ຮອງລົງມາແມ່ນອຸດສາຫະກໍາເຈ້ຍ ແລະ ຜະລິດຕະພັນເຈ້ຍ ແລະ ອຸດສາຫະກໍາໜັງສັດ-ຜະລິດຕະພັນໜັງສັດ 4,66 ແລະ 4,21 ຕາມລໍາດັບ.

ຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ສາມາດສ້າງວຽກເຮັດງານທໍາໄດ້ (Persons engaged) 145.400 ຄົນ; ໃນນີ້, ເປັນກໍາມະກອນ (ຜູ້ຜະລິດ) 118.585 ຄົນ. ແຮງງານເພດຊາຍ ກວມອັດຕາສ່ວນ 61,29% ແລະ ເພດຍິງ 38,71% ຂອງການຈ້າງງານລວມ. ອຸດສາຫະກໍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ ມີການຈ້າງງານຫຼາຍທີ່ສຸດ ຄື 26.054 ຄົນ, ກວມເອົາ 21,97% ຂອງອຸດສາຫະກໍາລວມ, ຮອງລົງມາແມ່ນອຸດສາຫະກໍາປຸງແຕ່ງໄມ້ ແລະ ເຟີນີເຈີ, ອຸດສາຫະກໍາຊີມັງ ແລະ ຜະລິດຕະພັນຊີມັງ ແລະ ອຸດສາຫະກໍາສະບຽງອາຫານ ເຊິ່ງກວມເອົາ 17,90%, 17,44% ແລະ 12,85% ຕາມລໍາດັບ.

## 2.2 ອຸດສາຫະກໍາປຸງແຕ່ງ

ຜົນສໍາເລັດໃນການຈັດຕັ້ງປະຕິບັດວຽກງານອຸດສາຫະກໍາປຸງແຕ່ງ ຈົນເຖິງປີ 2018 ມີແຕ່ລະດ້ານ ດັ່ງນີ້:

### 2.2.1. ການສ້າງນິຕິກໍາ ແລະ ສ້າງຄວາມເຂັ້ມແຂງດ້ານອຸດສາຫະກໍາປຸງແຕ່ງ

ມີການສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກໍາໄດ້ຫຼາຍສະບັບ ເປັນຕົ້ນແມ່ນກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ແລະ ກົດໝາຍວ່າດ້ວຍການຄຸ້ມຄອງທາດເຄມີ ພ້ອມທັງ ນິຕິກໍາລຸ່ມກົດໝາຍ ລວມທັງ ດໍາລັດ, ຂໍ້ຕົກລົງ, ບົດແນະນໍາ ແລະ ແຈ້ງການຕ່າງໆ ເພື່ອເປັນບ່ອນອີງໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກໍາປຸງແຕ່ງ ໂດຍສະເພາະ ແມ່ນສົ່ງເສີມການສ້າງພື້ນຖານໂຄງລ່າງໃຫ້ແກ່ການລົງທຶນດ້ານອຸດສາຫະກໍາປຸງແຕ່ງ, ການສ້າງຄວາມສາມາດແຂ່ງຂັນ ແລະ ຄຸ້ມຄອງດ້ານມາດຕະຖານເຕັກນິກ, ສຸຂານາໄມ ແລະ ຄວາມປອດໄພໂຮງງານ, ດ້ານມາດຕະຖານຜະລິດຕະພັນອຸດສາຫະກໍາ, ດ້ານສິ່ງແວດລ້ອມ ແລະ ເຄມີອຸດສາຫະກໍາ.

### 2.2.2. ການພັດທະນາພື້ນຖານໂຄງລ່າງສໍາລັບອຸດສາຫະກໍາປຸງແຕ່ງ

ສະພາບໂດຍລວມຂອງການພັດທະນາພື້ນຖານໂຄງລ່າງສໍາລັບຮອງຮັບ ແລະ ດຶງດູດເອົາການລົງທຶນດ້ານອຸດສາຫະກໍາປຸງແຕ່ງ ເຫັນວ່າໄດ້ຮັບການພັດທະນາເພີ່ມຂຶ້ນ. ມາຮອດປະຈຸບັນທົ່ວປະເທດ ມີການສໍາຫຼວດ ແລະ ກໍານົດເຂດທີ່ຈະພັດທະນາເປັນເຂດອຸດສາຫະກໍາ ທັງໝົດ 74 ແຫ່ງ, ກວມເອົາເນື້ອທີ່ດິນ 34.433 ເຮັກຕາ; ໃນນີ້, ເຂດອຸດສາຫະກໍາ ຈໍານວນໜຶ່ງກໍ່ໄດ້ຮັບການພັດທະນາແລ້ວ ເຊັ່ນ: ເຂດອຸດສາຫະກໍານະຄອນຫຼວງວຽງຈັນ (ເຂດຫຼັກ 21),

[4] ຜະລິດຕະພາບວັດແທກຈາກມູນຄ່າເພີ່ມການຜະລິດ (Manufacturing Value Added) ຫານໃຫ້ປັດໃຈການຜະລິດ (Input).

ເຂດອຸດສາຫະກຳແຂວງສະຫວັນນະເຂດ (ເຂດແກ້ງກະເບົາ) ແລະ ເຂດອຸດສາຫະກຳແຂວງຈຳປາສັກ (ເຂດເມືອງປະທຸມພອນ) ແລະ ແຂວງອື່ນໆ ຊຶ່ງມີໂຮງງານອຸດສາຫະກຳ ເຂົ້າໄປຕັ້ງຢູ່ໃນເຂດຫຼາຍກວ່າ 250 ແຫ່ງ.

ໃນນີ້ ໄດ້ມີການພັດທະນາເປັນນິຄົມອຸດສາຫະກຳແລ້ວ ຄື: ນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ-ໂນນທອງ (VITA Park) ຢູ່ນະຄອນຫຼວງວຽງຈັນ, ເຊິ່ງມີເນື້ອທີ່ 110 ເຮັກຕາ ແລະ ກຳລັງຂະຫຍາຍໄລຍະ 2 ອີກ 142 ເຮັກຕາ. ສະເພາະແຕ່ນິຄົມອຸດສາຫະກຳນີ້ ມີນັກລົງທຶນມາເຊົ່າດິນທັງໝົດ 48 ບໍລິສັດ, ໂດຍມີ 24 ໂຮງງານທີ່ໄດ້ເປີດດຳເນີນກິດຈະການແລ້ວ, ໄດ້ອອກໃບຢັ້ງຢືນການຜະລິດສິ່ງອອກສິນຄ້າໃຫ້ 7 ບໍລິສັດ, ສ້າງວຽກເຮັດງານທຳ ທັງໝົດ 2.246 ຄົນ (ແຮງງານຕ່າງປະເທດ 99 ຄົນ) ແລະ ສ້າງມູນຄ່າການສົ່ງອອກ ໄດ້ 40,8 ລ້ານໂດລາສະຫະລັດ ໃນປີ 2018.

ນອກນັ້ນ, ຍັງມີການພັດທະນາພື້ນຖານໂຄງລ່າງສິ່ງເສີມການລົງທຶນ ແລະ ດຳເນີນກິດຈະການດ້ານອຸດສາຫະກຳ ໃນເຂດເສດຖະກິດພິເສດອື່ນໆ ລວມທັງ ເຂດເສດຖະກິດພິເສດສະຫວັນ-ເຊໂນ, ເຂດເສດຖະກິດກອມລວມໄຊເສດຖາ, ເຂດເສດຖະກິດພິເສດທ່າແຂກ ແລະ ເຂດເສດຖະກິດພິເສດປາກເຊ-ແຈແປນເອສເອມອີ.

### 2.2.3. ບັນດາອຸດສະຫະກຳປຸງແຕ່ງ ທີ່ພົ້ນເດັ່ນ

ສະພາບລວມກ່ຽວກັບການຜະລິດ ແລະ ສົ່ງອອກແບ່ງຕາມປະເພດສິນຄ້າ ແລະ ຕະຫຼາດ ມີປະເພດອຸດສາຫະກຳປຸງແຕ່ງ ທີ່ຂະຫຍາຍຕົວພົ້ນເດັ່ນ ປະກອບດ້ວຍ:

1) ອຸດສາຫະກຳສະບຽງອາຫານ, ເຄື່ອງດື່ມ ແລະ ຢາສູບ

ຂະແໜງນີ້ຂະຫຍາຍຕົວຕະຫຼອດມາ ໂດຍສາມາດຕອບສະໜອງຄວາມຕ້ອງການພາຍໃນ ແລະ ສົ່ງອອກໄປຕ່າງປະເທດ. ໃນປີ 2018 ມີມູນຄ່າການຜະລິດບັນລຸໄດ້ 8.197 ຕື້ກີບ. ນອກຈາກນີ້ ຍັງມີອຸດສາຫະກຳອື່ນໆ ທີ່ມີການຂະຫຍາຍຕົວ ຄື: ອຸດສາຫະກຳປຸງແຕ່ງນ້ຳຕານ, ແປ້ງມັນຕົ້ນ, ຢາສູບ ແລະ ກາເຟ.

2) ອຸດສາຫະກຳແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ

ຂະແໜງນີ້ ມີຫົວໜ່ວຍການຜະລິດ 281 ແຫ່ງ ໃນປີ 2018; ໃນນີ້, ແບ່ງເປັນໂຮງງານຕັດຫຍິບເຄື່ອງນຸ່ງຫົ່ມ 82 ແຫ່ງ, ໂຮງຕ່ຳຫູກ ແລະ ແພເສື່ອ 191 ແຫ່ງ, ໂຮງງານປັກແສ່ວ 8 ແຫ່ງ. ລວມມູນຄ່າການລົງທຶນທັງໝົດ 7.500 ຕື້ກີບ, ມູນຄ່າການຜະລິດບັນລຸໄດ້ 3.146 ຕື້ກີບ (ປີ 2017).

3) ອຸດສາຫະກຳວັດສະດຸກໍ່ສ້າງ

ໃນປີ 2018, ມີໂຮງງານຜະລິດຊີມັງ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງໃນຂອບເຂດທົ່ວປະເທດ 21 ແຫ່ງ ມີຄວາມສາມາດຜະລິດຊີມັງໄດ້ປະມານ 15,8 ລ້ານໂຕນ/ປີ. ໃນນີ້, ໂຮງງານທີ່ໄດ້ດຳເນີນການຜະລິດແລ້ວມີ 18 ແຫ່ງ, ຄວາມສາມາດຜະລິດ 12,7 ລ້ານໂຕນ/ປີ ໂຮງງານເຫຼົ່ານີ້ ສາມາດຜະລິດຊີມັງອອກຮັບໃຊ້ສັງຄົມໄດ້ຢ່າງກ້ວາງຂວາງ, ຜະລິດຕະພັນໄດ້ມາດຕະຖານສາກົນ ແລະ ເປັນທີ່ຍອມຮັບຂອງຕະຫຼາດ (ຄວາມຕ້ອງການຊົມໃຊ້ຂອງຕະຫຼາດພາຍໃນປີ 2017 ປະມານ 4,1 ລ້ານໂຕນ/ປີ) ພ້ອມດຽວກັນນີ້ ຍັງສາມາດຜະລິດສົ່ງອອກໄດ້ຈຳນວນໜຶ່ງ, ການລົງທຶນໃນຂະແໜງນີ້ ມີທ່າອ່ຽງເພີ່ມຂຶ້ນ.

4) ອຸດສາຫະກຳພາຫະນະ

ໃນປີ 2018 ມີໂຮງງານປະກອບລົດໃຫຍ່ 2 ແຫ່ງ, ໂຮງງານປະກອບ ແລະ ຜະລິດຊິ້ນສ່ວນລົດຈັກໃໝ່ 10 ແຫ່ງ ແລະ ໂຮງງານປະກອບລົດຖີບ-ລໍ້ຍູ້ 4 ແຫ່ງ.

5) ອຸດສາຫະກຳປຸງແຕ່ງໄມ້

ອຸດສາຫະກຳປຸງແຕ່ງໄມ້ ໄດ້ຮັບການປັບປຸງ ແລະ ດັດສົມ ເພື່ອທັນເຂົ້າສູ່ລະບົບມາດຕະຖານ ໂດຍມີການຊຸກຍູ້ ແລະ ສົ່ງເສີມໃຫ້ມີການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນຂະບວນການປຸງແຕ່ງ ແນໃສ່ເຮັດໃຫ້ຜະລິດຕະພັນໄມ້ມີຄຸນນະພາບດີ, ມີມູນຄ່າເພີ່ມສູງ, ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ມີການນຳໃຊ້ໄມ້ຢ່າງມີຄຸນຄ່າ ແລະ ຍືນຍົງ. ດັ່ງເຫັນໄດ້ຢ່າງຊັດເຈນ ພາຍຫຼັງມີຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016, ມາດຖານຂອງໂຮງງານ ແລະ ເຄື່ອງຈັກໄດ້ຮັບການປັບປຸງ ແລະ ພັດທະນາໃຫ້ດີຂຶ້ນ, ມີຫຼາຍໂຮງງານໄດ້ຫັນມາປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບເພື່ອສົ່ງອອກ. ຄຽງຄູ່ກັນນີ້, ໂຮງງານປຸງແຕ່ງໄມ້ ໄດ້ຫຼຸດລົງ 482 ໂຮງງານ ແລະ ໂຮງງານປຸງແຕ່ງໄມ້ແບບຄອບຄົວຫຼຸດລົງ 1.211 ແຫ່ງ. ສາຍເຫດມາຈາກໂຮງງານບໍ່ໄດ້ມາດຕະຖານ, ສ້າງຕັ້ງໃນເຂດພື້ນທີ່ ທີ່ລັດຖະບານບໍ່ອະນຸຍາດ ແລະ ເຄື່ອນໄຫວທຸລະກິດບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ. ໃນທ້າຍປີ 2018, ຈຳນວນໂຮງງານທັງໝົດຍັງເຫຼືອ 1.254 ແຫ່ງ; ໃນນີ້, ເປັນໂຮງງານປຸງແຕ່ງໄມ້ ຈຳນວນ 1.113 ແຫ່ງ ແລະ ອຸດສາຫະກຳປຸງແຕ່ງໄມ້ແບບຄອບຄົວ ຈຳນວນ 141 ຫົວໜ່ວຍ.

6) ອຸດສາຫະກຳເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ

ອຸດສາຫະກຳນີ້ມີທ່າແຮງດ້ານການສົ່ງອອກ ຊຶ່ງມີບົດບາດສຳຄັນໃນການສ້າງວຽກເຮັດງານທຳ ແລະ ເຊື່ອມໂຍງກັບຖານການຜະລິດໃນພາກພື້ນ. ໃນປີ 2016 ມີໂຮງງານປະກອບເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກທັງໝົດ 20 ແຫ່ງ, ມູນຄ່າສົ່ງອອກ 319.7 ລ້ານໂດລາ ແລະ ສ້າງວຽກເຮັດງານທຳໄດ້ຫຼາຍກວ່າ 3.000 ຄົນ.

## 2.3 ຫັດຖະກຳ

ວຽກງານຫັດຖະກຳໄດ້ຮັບການສົ່ງເສີມ ແລະ ພັດທະນາ ເຮັດໃຫ້ມີຂະຫຍາຍຕົວຢ່າງຕໍ່ເນື່ອງ ທັງທາງດ້ານຈຳນວນໂຮງງານ ແລະ ມູນຄ່າການຜະລິດ. ປະຈຸບັນ ໃນທົ່ວປະເທດມີໂຮງງານ ແລະ ໂຮງຊ່າງຫັດຖະກຳທັງໝົດ ຈຳນວນ 4.025 ແຫ່ງ, ມູນຄ່າສົ່ງອອກສິນຄ້າຫັດຖະກຳ ບັນລຸ 20-25 ລ້ານໂດລາສະຫະລັດ/ປີ ແລະ ສ້າງວຽກເຮັດງານທຳໃຫ້ 42.659 ຄົນ.

ການຜະລິດສິນຄ້າຫັດຖະກຳຂອງປະຊາຊົນບັນດາເຜົ່າ ທີ່ມີມູນເຊື້ອ ແລະ ເປັນເອກະລັກຂອງທ້ອງຖິ່ນ ໄດ້ຮັບການພັດທະນາ ທັງດ້ານລວດລາຍ ແລະ ສີໄມ້ລາຍມືດີຂຶ້ນເປັນກ້າວໆ, ສາມາດຈຳໜ່າຍຢູ່ພາຍໃນ ແລະ ຕ່າງປະເທດ ແລະ ກໍໄດ້ຮັບລາງວັນຈາກການເຂົ້າປະກວດຜະລິດຕະພັນຫັດຖະກຳໃນລະດັບພາກພື້ນໄດ້ ຈຳນວນໜຶ່ງ. ຜະລິດຕະພັນຫັດຖະກຳຕົ້ນຕໍ ປະກອບດ້ວຍ ແຜ່ນແພ, ເຄື່ອງຈັກສານຈາກຫວາຍ ແລະ ໄມ້ປ່ອງ, ເຄື່ອງແກະສະລັກໄມ້, ເຄື່ອງເອ້ຢ້ອງ (ຈາກເງິນ, ຄຳ), ເຈຍລະໃບເຜັດ-ພອຍ ແລະ ອື່ນໆ. ໃນນີ້, ຜ້າຝ້າຍ-ຜ້າໄໝມ້ອນຍ້ອມສີທຳມະຊາດ ເປັນສິນຄ້າທີ່ໄດ້ຮັບຄວາມນິຍົມຢ່າງກວ້າງຂວາງ ຂອງທັງຕະຫຼາດພາຍໃນ ແລະ ຕ່າງປະເທດ. ການຈຳໜ່າຍຜະລິດຕະພັນຫັດຖະກຳ ໃນແຕ່ລະປີເພີ່ມຂຶ້ນປະມານ 11-13%, ຕະຫຼາດສົ່ງອອກສິນຄ້າຫັດຖະກຳຕົ້ນຕໍໄດ້ແກ່ ຕະຫຼາດຍີ່ປຸ່ນ, ເອີຣົບ ແລະ ອາເມລິກາ. ປະຈຸບັນມີການລົງທຶນໃສ່ການຜະລິດສິນຄ້າຫັດຖະກຳ, ສ້າງຕັ້ງເປັນຫົວໜ່ວຍທຸລະກິດ ແລະ ລວມເປັນກຸ່ມ

ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ. ການຜະລິດຫັດຖະກຳ ໄດ້ສ້າງລາຍຮັບໃຫ້ແກ່ປະຊາຊົນ ປະກອບສ່ວນໃນການລຶບລ້າງຄວາມທຸກຍາກ.

ການຈັດຕັ້ງປະຕິບັດວຽກງານຫັດຖະກຳ ໄດ້ດຳເນີນຕາມແຜນດຳເນີນງານຫັດຖະກຳ 5 ປີ (ປີ 2016-2020) ສຸມໃສ່ການຈັດຝຶກອົບຮົມໃຫ້ແກ່ຊາວຊ່າງຫັດຖະກຳ ໃນການຍົກລະດັບຄວາມຮູ້ສີມືແຮງງານ ເປັນຕົ້ນ ການປັບປຸງເຕັກນິກວິທີການຜະລິດ, ການນຳໃຊ້ເຄື່ອງມືທຸ່ນແຮງ, ການອອກແບບ ແລະ ພັດທະນາຜະລິດຕະພັນ ໂດຍມີການປະສົມປະສານກັບເອກະລັກລວດລາຍດັ້ງເດີມ ໂດຍສະເພາະແມ່ນ ການຕຳແຜ່ນແພພື້ນເມືອງ, ການແກະສະຫຼັກໄມ້, ການຈັກສານ ເຮັດໃຫ້ຜະລິດຕະພັນມີຄວາມສວຍງາມ, ປານີດ ແລະ ສ້າງມູນຄ່າເພີ່ມສູງ. ໃນໄລຍະຜ່ານມາ ມີຫຼາຍຫົວໜ່ວຍຫັດຖະກຳໄດ້ພັດທະນາຕົນເອງໃຫ້ມີຄວາມກ້າວໜ້າ ແລະ ໄດ້ຮັບການຢັ້ງຢືນເປັນສິນຄ້າ ໜຶ່ງເມືອງ-ໜຶ່ງຜະລິດຕະພັນ (ODOP) ປະກອບສ່ວນໃນການສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ຍົກສູງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າຢູ່ທ້ອງຖິ່ນຕ່າງໆ ໃຫ້ດີຂຶ້ນເທື່ອລະກ້າວ. ອີກດ້ານໜຶ່ງ, ຫັດຖະກຳໄດ້ສ່ອງແສງໃຫ້ເຫັນເຖິງຄວາມເປັນເອກະລັກອັນໂດດເດັ່ນຂອງຊາດ, ດ້ານວັດທະນະທຳ, ຄວາມລະອຽດອ່ອນ, ຄວາມເປັນເອກະລັກສະເພາະຂອງຊົນເຜົ່າແຕ່ລະທ້ອງຖິ່ນ ທີ່ມີມູນເຊື້ອມາແຕ່ບັນພະບຸລຸດ.

## 2.4 ການຮ່ວມມືສາກົນ

ການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຍັງມີຫຼາຍດ້ານທີ່ຕ້ອງປັບປຸງ ແລະ ຊຸກຍູ້ສົ່ງເສີມ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນ ແລະ ຖືສຳຄັນໃນການຮ່ວມມື ແລະ ຮັບເອົາການຊ່ວຍເຫຼືອນຳສາກົນ ໂດຍສະເພາະ ຈາກປະເທດເພື່ອນມິດ ແລະ ບັນດາຄູ່ຮ່ວມພັດທະນາ ໃນດ້ານເຕັກໂນໂລຊີ, ເຕັກນິກວິຊາການ ແລະ ທຶນຮອນ ເພື່ອປະຕິບັດວຽກງານສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນຕົ້ນ:

1) ຮ່ວມມືກັບອົງການສະຫະປະຊາຊາດເພື່ອການພັດທະນາອຸດສາຫະກຳ (UNIDO) ໃນການສົ່ງເສີມການຜະລິດທີ່ສະອາດ ແລະ ການສ້າງຄວາມເຂັ້ມແຂງ-ຖານຂໍ້ມູນທາງດ້ານສະຖິຕິອຸດສາຫະກຳ;
2) ຮ່ວມມືກັບຍີ່ປຸ່ນ ໃນການພັດທະນາ ແລະ ຍົກລະດັບສີມືແຮງງານດ້ານອຸດສາຫະກຳປຸງແຕ່ງໄມ້ ແລະ ເຟີນີເຈີ ເພື່ອສົ່ງເສີມການສົ່ງອອກຜະລິດຕະພັນໄມ້ຕາມມາດຕະຖານຂອງຍີ່ປຸ່ນ;
3) ຮ່ວມມືໃນຂອບອານຸພາກພື້ນ ແລະ ອາຊຽນ ແລະ ຮ່ວມມືກັບພາກສ່ວນສະຖາບັນ ແລະ ອົງການຈັດຕັ້ງສາກົນອື່ນໆ ອີກຈຳນວນໜຶ່ງ.

## 2.5 ການສັງເກດຕີລາຄາ

ການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳໃນໄລຍະຜ່ານມາ ໄດ້ປະສົບຜົນສຳເລັດຫຼາຍດ້ານ ແຕ່ກໍຍັງມີບາງຂໍ້ຄົງຄ້າງ ຈຳນວນໜຶ່ງ. ດັ່ງນັ້ນ, ຈຶ່ງສາມາດຕີລາຄາກ່ຽວກັບຈຸດແຂງ, ຈຸດອ່ອນ, ກາລະໂອກາດ ແລະ ສິ່ງທ້າທາຍ (SWOT Analysis) ໃນການພັດທະນາຂະແໜງນີ້ ໄດ້ດັ່ງນີ້:

### 2.5.1. ຈຸດແຂງ ແລະ ຈຸດອ່ອນ

**ກ. ຈຸດແຂງ**

1) ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ ແລະ ປະເທດຊາດມີຄວາມສະຫງົບ;

2) ຄ່າຈ້າງແຮງງານຂັ້ນຕ່ຳ ບໍ່ສູງ ເມື່ອສົມທຽບກັບປະເທດໃກ້ຄຽງ;

3) ປະຊາຊົນລາວມີມູນເຊື້ອ ແລະ ສີມືອັນປານີດ ໃນການຜະລິດຫັດຖະກຳ;

4) ວັດຖຸດິບ ເຊັ່ນ ຊັບພະຍາກອນແຮ່ທາດ ຍັງພຽງພໍ (ມີການຂຸດຄົ້ນ ແລະສົ່ງອອກ ແບບບໍ່ທັນໄດ້ປຸງແຕ່ງເປັນສຳເລັດຮູບ) ແລະ ພືດກະສິກຳທີ່ຫຼາກຫຼາຍ ແລະ ປອດສານພິດ;

5) ມີແຫຼ່ງພະລັງງານໄຟຟ້າພຽງພໍ;

6) ທີ່ດິນກ້ວາງຂວາງ ແລະ ຄຸນນະພາບດິນ ຍັງອຸດົມສົມບູນ;

7) ນະໂຍບາຍເປີດກວ້າງສົ່ງເສີມການລົງທຶນ ແລະ ການບໍລິການປະຕູດຽວ;

8) ນະໂບາຍພາສີ-ອາກອນ ເປັນຕົ້ນ: ຍົກເວັ້ນພາສີ-ອາກອນການນຳເຂົ້າເຄື່ອງຈັກ, ວັດຖຸອຸປະກອນ, ວັດຖຸດິບ, ຍົກເວັ້ນອາກອນກຳໄລ ແລະ ອື່ນໆ;

9) ມີກົດໝາຍ ແລະ ລະບຽບການເປັນພື້ນຖານໃນການສົ່ງເສີມ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

**ຂ. ຈຸດອ່ອນ**

1) ພື້ນຖານໂຄງລ່າງ ຍັງອ່ອນນ້ອຍ, ທັງຍັງບໍ່ທັນໄດ້ຮັບການພັດທະນາ ເທົ່າທີ່ຄວນ ທີ່ຈະເປັນເງື່ອນໄຂໃຫ້ແກ່ການຂະຫຍາຍຕົວຂອງຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນຕົ້ນ ການສ້າງ ແລະ ພັດທະນາເຂດ ແລະ ນິຄົມອຸດສາຫະກຳ ກໍຄືສາທາລະນຸປະໂພກ, ສິ່ງອຳນວຍຄວາມສະດວກດ້ານການຄົມມະຄົມ-ຂົນສົ່ງ ແລະ ອື່ນໆ;

2) ການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳຈຳນວນໜຶ່ງ ຍັງນຳໃຊ້ເຕັກໂນໂລຊີແບບເກົ່າ, ເຮັດໃຫ້ສິ້ນເປືອງວັດຖຸດິບ ແລະ ພະລັງງານຫຼາຍ ທັງສ້າງຜົນກະທົບຕໍ່ສິ່ງແວດລ້ອມ;

3) ຈຳນວນອຸດສາຫະກຳສ່ວນຫຼາຍແມ່ນ ອຸດສາຫະກຳຂະໜາດນ້ອຍ ແລະ ກາງ ຊຶ່ງຄວາມເປັນມືອາຊີບໃນການບໍລິຫານຈັດການທຸລະກິດຍັງຈຳກັດ, ຄວາມສາມາດໃນການແຂ່ງຂັນ ແລະ ການເຊື່ອມໂຍງເຂົ້າໃນເຄືອຂ່າຍການຜະລິດ ຂອງພາກພື້ນ ແລະ ສາກົນ ຍັງບໍ່ທັນສູງ;

4) ການສ້າງມູນຄ່າເພີ່ມໃນບາງຂະແໜງ ຍັງຢູ່ໃນຂອບເຂດຈຳກັດ ເຊັ່ນ: ອຸດສາຫະກຳປຸງແຕ່ງໄມ້ ແລະ ແຮ່ທາດ ຈຳນວນໜຶ່ງ ຍັງບໍ່ທັນໄດ້ຮັບການປຸງແຕ່ງເພື່ອສ້າງມູນຄ່າເພີ່ມ ແລະ ເປັນສຳເລັດຮູບ, ມີລັກສະນະບໍ່ຍືນຍົງ;

5) ດ້ານທຶນມີການຈຳກັດ ແລະ ການເຂົ້າຫາແຫຼ່ງທຶນ ຍັງພົບຄວາມຫຍຸ້ງຍາກ ໂດຍສະເພາະສຳລັບຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ. ພ້ອມນັ້ນ, ດ້ານງົບປະມານ ເພື່ອຊຸກຍູ້ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ກໍຍັງມີຈຳກັດ;

6) ຂາດເຂີນແຮງງານທັງປະລິມານ ແລະ ຄຸນນະພາບ ໂດຍສະເພາະວິສະວະກອນ ແລະ ແຮງງານທີ່ມີສີມື;

7) ປັດໃຈສະໜັບສະໜູນໃຫ້ແກ່ການວາງແຜນ ແລະ ການຕັດສິນໃຈລົງທຶນ ຍັງຈຳກັດ ເຊັ່ນ: ການສະໜອງ ແລະ ການເຜີຍແຜ່ຂໍ້ມູນຂ່າວສານ-ສະຖິຕິ, ການຄົ້ນຄວ້າ, ວິໄຈ ແລະ ພັດທະນາ ແລະ ອື່ນໆ;

8) ຄ່າຂົນສົ່ງສູງ ເປັນຈຸດອ່ອນ ຫຼື ຂໍ້ເສຍປຽບໃນການແຂ່ງຂັນ;

9) ການໂຄສະນາເຜີຍແຜ່ນະໂຍບາຍການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ຍັງບໍ່ທັນກວ້າງຂວາງເທົ່າທີ່ຄວນ ເຮັດໃຫ້ຜູ້ປະກອບການ ແລະ ສັງຄົມທົ່ວໄປ ຍັງບໍ່ທັນຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ເພື່ອຂະຫຍາຍທຸລະກິດ ແລະ ຕະຫຼາດທີ່ເພີ່ມຂຶ້ນ.

10) ການກຳນົດນະໂຍບາຍຂອງລັດຍັງບໍ່ທັນມີຄວາມສະເໝີຕົ້ນສະເໝີປາຍ ແລະ ກົນໄກການຄຸ້ມຄອງ ແລະ ປະສານງານລະຫວ່າງຂະແໜງການ ຍັງບໍ່ກົມກຽວກັນ.

### 2.5.2 ກາລະໂອກາດ ແລະ ສິ່ງທ້າທາຍ

**ກ. ກາລະໂອກາດ**

1) ປະເທດເຮົາຢູ່ໃກ້ຕະຫຼາດໃຫຍ່ຂອງໂລກ ເຊັ່ນ: ສປ ຈີນ ຊຶ່ງມີພົນລະເມືອງ 1,42 ຕື້ຄົນ ແລະ ພາກພື້ນອາຊຽນ ມີເຖິງ 654 ລ້ານຄົນ;

2) ມີທ່າອ່ຽງການຍ້າຍຖານການຜະລິດ ຈາກປະເທດກຳລັງພັດທະນາ ຫຼື ພັດທະນາແລ້ວ ທີ່ມີຄ່າແຮງງານສູງ ເຂົ້າມາສູ່ ສປປ ລາວ ໂດຍສະເພາະອຸດສາຫະກຳທີ່ມີທ່າແຮງ ເປັນຕົ້ນ ອຸດສາຫະກຳປຸງແຕ່ງກະສິກຳ, ອຸດສາຫະກຳເຂັ້ມງານ (ນຳໃຊ້ແຮງງານຫຼາຍ) ແລະ ອຸດສາຫະກຳທີ່ນຳໃຊ້ພະລັງງານໄຟຟ້າຫຼາຍ;

3) ໄດ້ຮັບສິດທິພິເສດທາງການຄ້າ ຈາກປະເທດທີ່ພັດທະນາແລ້ວ (ສະຫະພາບເອີຣົບ, ຍີ່ປຸ່ນ...) ແລະ ປະເທດອາຊຽນ;

4) ມີເງື່ອນໄຂສະດວກໃນການເຊື່ອມໂຍງເສດຖະກິດກັບສາກົນ ຊຶ່ງການເປັນສະມາຊິກອົງການການຄ້າໂລກ ແລະ ປະຊາຄົມເສດຖະກິດອາຊຽນ ເປັນໂອກາດທີ່ດີ ທີ່ຈະໄດ້ຮັບການປະຕິບັດ ແລະ ປົກປ້ອງສິດຜົນປະໂຫຍດດ້ານການຄ້າຢ່າງເທົ່າທຽມ;

5) ເປັນປະເທດຕັ້ງຢູ່ໃຈກາງທາງຜ່ານໃນຂົງເຂດອານຸພາກພື້ນ (ແລວເສດຖະກິດເໜືອ-ໃຕ້; ຕາເວັນອອກ-ຕາເວັນຕົກ) ຈຶ່ງເປັນໂອກາດທີ່ເປັນບ່ອນຕັ້ງຖານການຜະລິດເພື່ອສົ່ງໄປຕະຫຼາດໃກ້ຄຽງ ໃນຂົງເຂດພາກພື້ນ ກໍຄືຕະຫຼາດໂລກ;

6) ເສັ້ນທາງລົດໄຟລາວ-ຈີນ ຈະສຳເລັດໃນປີ 2021 ເປັນພື້ນຖານສະດວກໃນການຂົນສົ່ງ ແລະ ເຊື່ອມໂຍງພື້ນຖານການຜະລິດກັບ ສປ ຈີນ, ປະເທດອາຊຽນ ແລະ ປະເທດອື່ນໆ ໃນພາກພື້ນນີ້;

7) ນັກລົງທຶນມີຄວາມສົນໃຈລົງທຶນໃນພາກພື້ນນີ້ ເພາະເປັນເຂດທີ່ເສດຖະກິດກຳລັງຂະຫຍາຍຕົວແຮງ ແລະ ເຕີບໂຕຢ່າງຕໍ່ເນື່ອງ;

8) ຕະຫຼາດໂລກກຳລັງສົນໃຈຜະລິດຕະພັນປອດສານພິດ ທີ່ເຫັນວ່າເຮົາມີເງື່ອນໄຂດີ ແລະ ມີຄວາມເປັນໄປໄດ້ສູງ ທີ່ຈະປູກພືດປອດສານພິດ ແລ້ວປຸງແຕ່ງເປັນຜະລິດຕະພັນປອດສານພິດ.

9) ໄດ້ຮັບຜົນກະທົບໜ້ອຍຈາກອຸທົກກະໄພ ແລະ ການປ່ຽນແປງດິນຟ້າອາກາດ.

**ຂ. ສິ່ງທ້າທາຍ**

1) ຂະໜາດຕະຫຼາດພາຍໃນນ້ອຍ ແລະ ມີກຳລັງການຊື້ບໍ່ສູງ;

2) ເງື່ອນໄຂການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ (ການເປີດຕະຫລາດເສລີໃນຂົງເຂດພາກພື້ນ ແລະ ໃນໂລກ) ຈະມີການແຂ່ງຂັນສູງຂຶ້ນ ໂດຍສະເພາະແມ່ນ ການແຂ່ງຂັນກັບຖານການຜະລິດຂະໜາດໃຫຍ່ ທີ່ມີຄວາມໄດ້ປຽບດ້ານຕົ້ນທຶນການຜະລິດຕໍ່າ ເປັນຕົ້ນ ສປ ຈີນ, ໄທ, ສສ ຫວຽດນາມ ແລະ ອື່ນໆ;

3) ກົນໄກການປະສານງານ-ພົວພັນຊື້ຂາຍສິນຄ້າ ແລະ ການປະຕິບັດພັນທະຕ່າງໆ ມີຄວາມສະຫຼັບຊັບຊ້ອນຍິ່ງຂຶ້ນ ແລະ ທຸກຝ່າຍຕ້ອງໄດ້ເຄົາລົບ ແລະ ຈັດຕັ້ງປະຕິບັດຕາມກົນໄກ ແລະ ລະບຽບການທີ່ເປັນເອກະພາບ ແລະ ເທົ່າທຽມ;

4) ພາຍຫຼັງທີ່ ສປປ ລາວ ຫຼຸດພົ້ນຈາກສະຖານະປະເທດດ້ອຍພັດທະນາ ອາດບໍ່ໄດ້ຮັບສິດທິພິເສດທາງການຄ້າເພື່ອສົ່ງອອກໄປບາງປະເທດ ແລະ ການຊ່ວຍເຫຼືອຂອງຕ່າງປະເທດອາດຈະຫຼຸດລົງ;

5) ມາດຕະການສຸຂານາໄມ, ອະນາໄມພືດ ແລະ ລະບຽບການທາງດ້ານເຕັກນິກຂອງປະເທດ ໄດ້ຕັ້ງເປັນຂໍ້ກີດກັນ ທີ່ສູງຂຶ້ນເລື້ອຍໆ.

## 2.6 ບົດຮຽນທີ່ຖອດຖອນໄດ້

ບົນພື້ນຖານໝາກຜົນທີ່ຍາດມາໄດ້ ສົມທົບກັບການຕີລາຄາຈຸດແຂງ, ຈຸດອ່ອນ, ກາລະໂອກາດ ແລະ ສິ່ງທ້າທາຍຕໍ່ການພັດທະນາອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ, ຈຶ່ງສາມາດຖອດໄດ້ບາງບົດຮຽນ ໄດ້ດັ່ງນີ້:

1) ຍຶດໝັ້ນ ແລະ ປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ, ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ໃຫ້ເປັນແຜນງານ, ເປັນໂຄງການ ແລະ ມາດຕະການຈັດຕັ້ງປະຕິບັດອັນລະອຽດ ແລະ ກົມກຽວກັນ;

2) ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ໃຫ້ເປັນລະບົບ, ມີປະສິດທິພາບ;

3) ສ້າງຄວາມເປັນມືອາຊີບໃນການບໍລິຫານຈັດການ ການຜະລິດ ໃຫ້ແກ່ອຸດສາຫະກໍາຂະໜາດນ້ອຍ ແລະ ກາງ, ສ້າງຄວາມສາມາດໃນການແຂ່ງຂັນ ແລະ ການເຊື່ອມໂຍງເຂົ້າໃນເຄືອຂ່າຍການຜະລິດ ຂອງພາກພື້ນ ແລະ ສາກົນ;

4) ສຸມໃສ່ສົ່ງເສີມການຜະລິດສິນຄ້າຊົມໃຊ້ພາຍໃນ ທົດແທນການນໍາເຂົ້າກ່ອນ ແລະ ສົ່ງເສີມການຜະລິດເພື່ອການສົ່ງອອກ;

5) ຫັນເປັນອຸດສະຫະກໍາ ແລະ ທັນສະໄໝ ຕາມຍຸກສະໄໝອຸດສາຫະກໍາ 4.0 ຕິດພັນກັບການເສີມຂະຫຍາຍທ່າແຮງເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ໂດຍເນັ້ນໃສ່ສົ່ງເສີມການລົງທຶນດ້ານອຸດສາຫະກໍາ ທີ່ນໍາໃຊ້ພະລັງງານໄຟຟ້າຫຼາຍ ຕອບສະໜອງນະໂຍບາຍຄ່າໄຟຟ້າອຸດສາຫະກໍາລາຄາຖືກ;

6) ປັບປຸງ ແລະ ຂະຫຍາຍກົງຈັກການຈັດຕັ້ງຈໍານວນໜຶ່ງ ເພື່ອຮອງຮັບ ແລະ ເອື້ອອໍານວຍຄວາມສະດວກໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ;

7) ສືບຕໍ່ຍາດແຍ່ງການຊ່ວຍເຫຼືອ ແລະ ດຶງດູດການລົງທຶນຈາກຕ່າງປະເທດ ເພື່ອພັດທະນາຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ.

## 3. ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2019-2020

### 3.1 ຈຸດປະສົງ ແລະ ເປົ້າໝາຍ

#### 3.1.1 ຈຸດປະສົງ

1) ເພື່ອເຮັດໃຫ້ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນພື້ນຖານສ້າງຄວາມສົມດູນໃຫ້ແກ່ເສດຖະກິດມະຫາພາກ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ ສ້າງລາຍຮັບ ແລະ ວຽກເຮັດງານທຳ ປະກອບສ່ວນໃນການເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕາມທິດສີຂຽວ ແລະ ເປັນມິດກັບສິ່ງແວດລ້ອມ;
2) ເພື່ອໃຫ້ອຸດສາຫະກຳປຸງແຕ່ງ ທີ່ສຳຄັນ ແລະ ມີທ່າແຮງ ເປັນຕົ້ນ ການປຸງແຕ່ງຜົນຜະລິດຈາກກະສິກຳ ແລະ ປ່າໄມ້ ແລະ ຂະແໜງອື່ນໆ ມີຄວາມສາມາດໃນການແຂ່ງຂັນ ແລະ ສາມາດເຊື່ອມໂຍງເຂົ້າກັບເຄືອຂ່າຍການຜະລິດພາກພື້ນ ແລະ ສາກົນ;
3) ເພື່ອພັດທະນາຫັດຖະກຳ ໃຫ້ມີການຂະຫຍາຍຕົວກາຍເປັນສິນຄ້າທີ່ມີຄວາມເປັນເອກະລັກສະເພາະ, ມີຄຸນຄ່າສູງທາງດ້ານສິລະປະວັດທະນະທຳ ແລະ ພູມປັນຍາຂອງປະຊາຊົນບັນດາເຜົ່າ.

#### 3.1.2 ເປົ້າໝາຍ

1) ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳທີ່ເປັນທ່າແຮງ ໃຫ້ສ້າງມູນຄ່າເພີ່ມສູງ, ໄດ້ມາດຕະຖານ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນໄດ້;
2) ພັດທະນາພື້ນຖານໂຄງລ່າງ ແລະ ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ກັບພາກທຸລະກິດອຸດສາຫະກຳປຸງແຕ່ງ;
3) ສົ່ງເສີມ ແລະ ພັດທະນາຫັດຖະກຳ, ຜະລິດໃຫ້ເປັນສິນຄ້າ ມີຄວາມຫຼາກຫຼາຍຕາມທ່າແຮງ ແລະ ມູນເຊື້ອວັດທະນະທຳ ທີ່ເປັນເອກະລັກຂອງທ້ອງຖິ່ນ;
4) ເພີ່ມທະວີກົນໄກການປະສານງານ ແລະ ຮ່ວມມືກັບພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

### 3.2. ຕົວຊີ້ວັດ

ການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຮອດປີ 2020 ໃຫ້ບັນລຸໄດ້ບັນດາຕົວຊີ້ວັດສຳຄັນ ດັ່ງລຸ່ມນີ້:

ຕາຕະລາງ 1 ຕົວຊີ້ວັດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

| ຕົວຊີ້ວັດ | ຫົວໜ່ວຍ | ພື້ນຖານ (ປີຖານ) | ຄາດໝາຍບັນລຸ 2020 |
|---|---|---|---|
| ອັດຕາຂະຫຍາຍຕົວມູນຄ່າການຜະລິດ | % | 8,24 (2016-2018) | 12 |
| ອັດຕາການປະກອບສ່ວນໃນລວມຍອດຜະລິດຕະພັນພາຍໃນ (GDP) | % | 9 (2018) | 11 |

| | | | |
|---|---|---|---|
| ການສ້າງມູນຄ່າເພີ່ມ | ຕື້ກີບ | 10.436<br>(2018) | 14.919 |
| ອັດຕາຂະຫຍາຍຕົວການສົ່ງອອກສິນຄ້າ ອຸດສາຫະກຳປຸງແຕ່ງ | % | 10,3<br>(2016-2018) | 12 |
| ມູນຄ່າເພີ່ມສິນຄ້າເຕັກໂນໂລຊີລະດັບກາງ ແລະ ສູງ | % | 12<br>(2015) | 13 |
| ການສ້າງວຽກເຮັດງານທຳ | ຄົນ | 154.854<br>(2018) | 160.000 |

## 3.3 ຈຸດສຸມວຽກງານພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2019-2020

ຈຸດສຸມໃນການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2019-2020 ປະກອບດ້ວຍ 2 ແຜນງານ ຕົ້ນຕໍ ຄື:

**1. ແຜນງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ;**

**2. ແຜນງານສົ່ງເສີມ ແລະ ພັດທະນາ ຫັດຖະກຳ.**

### 3.3.1 . ແຜນງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ

**ກ. ນະໂຍບາຍລວມ**

ສຸມໃສ່ພັດທະນາອຸດສາຫະກຳທີ່ມີທ່າແຮງ, ອຸດສາຫະກຳທີ່ຕິດພັນກັບການນຳໃຊ້ຜົນຜະລິດກະສິກຳ-ປ່າໄມ້ ເຂົ້າໃນການຜະລິດ-ປຸງແຕ່ງໃຫ້ຫຼາຍຂຶ້ນ, ສົ່ງເສີມອຸດສາຫະກຳແຜ່ນແພ ແລະ ຕັດຫຍິບໃຫ້ເປັນສິນຄ້າ ສະໜອງພາຍໃນ ແລະ ສົ່ງອອກ, ສົ່ງເສີມການນຳໃຊ້ເຕັກນິກ-ເຕັກໂນໂລຊີທັນສະໄໝເພື່ອໃຫ້ສາມາດສ້າງມູນຄ່າເພີ່ມໃຫ້ຜະລິດຕະພັນ ສາມາດແຂ່ງຂັນກັບຕ່າງປະເທດ, ສ້າງຄວາມເປັນມືອາຊີບໃນການບໍລິຫານຈັດການການຜະລິດ ໃຫ້ແກ່ອຸດສາຫະກຳຂະໜາດນ້ອຍ ແລະ ກາງ, ສ້າງຄວາມສາມາດໃນການແຂ່ງຂັນ ແລະ ການເຊື່ອມໂຍງເຂົ້າໃນເຄືອຂ່າຍການຜະລິດ ຂອງພາກພື້ນ ແລະ ສາກົນ ເພື່ອເສີມສ້າງອຸດສາຫະກຳປຸງແຕ່ງເປັນຂະແໜງການພື້ນຖານຂອງເສດຖະກິດທີ່ໜັກແໜ້ນ ທັງຊ່ວຍແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດມະຫາພາກໃນປະຈຸບັນ ປະກອບສ່ວນໃນການສ້າງວຽກເຮັດງານທຳ ແລະ ລາຍຮັບ ໃຫ້ປະຊາຊົນບັນດາເຜົ່າ ຢ່າງທົ່ວເຖິງ.

**ຂ. ການສົ່ງເສີມ ແລະ ພັດທະນາ ອຸດສາຫະກຳປຸງແຕ່ງ**

ການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ປີ 2019-2020 ປະກອບມີ 2 ດ້ານ ຄື:

1) ສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ຕາມຂະແໜງການຍ່ອຍ;

2) ພັດທະນາພື້ນຖານໂຄງລ່າງ ແລະ ການສ້າງສະພາບແວດລ້ອມເອື້ອອຳນວຍ;

**1) ສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ຕາມຂະແໜງການຍ່ອຍ**

ການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ຂະແໜງການຍ່ອຍ ແມ່ນເນັ້ນໜັກ 4 ອຸດສາຫະກຳຍ່ອຍທີ່ເປັນເປົ້າໝາຍ ທີ່ຈະສຸມໃສ່ຊຸກຍູ້ສົ່ງເສີມເປັນພິເສດ ໂດຍສະເພາະ ອຸດສາຫະກຳຂະໜາດນ້ອຍ-ກາງ ແລະ ແບບຄອບຄົວ

ພ້ອມທັງສົ່ງເສີມຜູ້ປະກອບການໃໝ່ (startup) ທີ່ນໍາໃຊ້ເຕັກໂນໂລຊີ ແລະ ນະວັດຕະກໍາ. ການສົ່ງເສີມ ແລະ ພັດທະນາອຸດສາຫະກໍາປຸງແຕ່ງ ຂະແໜງການຍ່ອຍຈະໄດ້ສຸມໃສ່ 4 ຂະແໜງການ ຄື:

1) ອຸດສາຫະກໍາປຸງແຕ່ງກະສິກໍາ-ອາຫານ;
2) ອຸດສາຫະກໍາແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ;
3) ອຸດສາຫະກໍາວັດສະດຸກໍ່ສ້າງ;
4) ອຸດສາຫະກໍາສິ່ງພິມ ແລະ ເຄື່ອງຫຸ້ມຫໍ່.

ການສົ່ງເສີມ ແລະ ພັດທະນາອຸດສາຫະກໍາປຸງແຕ່ງ ຂະແໜງການຍ່ອຍ ຈະໄດ້ຮັບການຜັນຂະຫຍາຍອອກເປັນແຜນວຽກຈຸດສຸມ ແລະ ໂຄງການລະອຽດ ໃນເອກະສານຊ້ອນທ້າຍ.

**2) ພັດທະນາພື້ນຖານໂຄງລ່າງ ແລະ ສ້າງສະພາບແວດລ້ອມເອື້ອອໍານວຍ**

ສົ່ງເສີມ ແລະ ດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃສ່ການພັດທະນາເຂດ ແລະ ນິຄົມອຸດສະຫະກໍາ ຕາມແລວເສັ້ນທາງລົດໄຟລາວ-ຈີນ ສຸມໃສ່ແຂວງທີ່ເຫັນວ່າມີທ່າແຮງ, ມີຄວາມເໝາະສົມ ແລະ ມີພື້ນທີ່ທີ່ເປັນໄປໄດ້ ເປັນຕົ້ນ ຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງອຸດົມໄຊ ແລະ ແຂວງຫຼວງນໍ້າທາ. ພ້ອມນີ້ ກໍ່ຈະໄດ້ເອົາໃຈໃສ່ສ້າງກົນໄກ ເພື່ອເອື້ອອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດກິດອຸດສາຫະກໍາປຸງແຕ່ງ ໃຫ້ມີຄວາມສະດວກວ່ອງໄວ ແລະ ໂປ່ງໃສ. ຄົ້ນຄວ້າ ແລະ ແກ້ໄຂບັນຫາທີ່ບໍ່ເອື້ອອໍານວຍແກ່ພາກທຸລະກິດ ເປັນຕົ້ນແມ່ນການນໍາເຂົ້າປັດໃຈການຜະລິດ ແລະ ການສົ່ງອອກສິນຄ້າ, ການສະໜອງຂໍ້ມູນຂ່າວສານ ແລະ ການອະນຸມັດ-ອະນຸຍາດຕ່າງໆ. ດ້ານການຄຸ້ມຄອງຈະໄດ້ສຸມໃສ່ການສ້າງ ແລະ ປັບປຸງນິຕິກໍາລຸ່ມກົດໝາຍ ແລະ ບັນດາກົນໄກ ເພື່ອຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກໍາປຸງແຕ່ງ ໃຫ້ສາມາດຈັດຕັ້ງປະຕິບັດກົນໄກຊຸກຍູ້ສົ່ງເສີມ ແລະ ຄຸ້ມຄອງເຂົ້າສູ່ລະບຽບ, ຮັບປະກັນຄວາມປອດໄພ, ສຸຂານາໄມ, ມາດຕະຖານ, ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ກໍຄືຄວາມສ່ຽງຈາກເຄມີ ຕະຫຼອດເຖິງການຄຸ້ມຄອງເກັບກໍາສະຖິຕິໃຫ້ຊັດເຈນ, ທັນສະພາບ ແລະ ການຄຸ້ມຄອງເຂດ ແລະນິຄົມອຸດສາຫະກໍາ.

ການພັດທະນາພື້ນຖານໂຄງລ່າງ ແລະ ການສ້າງສະພາບແວດລ້ອມເອື້ອອໍານວຍ ປະກອບດ້ວຍ 3 ວຽກງານຍ່ອຍຄື:

1) ສົ່ງເສີມການພັດທະນາເຂດ ແລະ ນິຄົມອຸດສາຫະກໍາ ຕາມແລວເສັ້ນທາງລົດໄຟ ລາວ-ຈີນ;
2) ສ້າງກົນໄກ ເພື່ອເອື້ອອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດອຸດສາຫະກໍາປຸງແຕ່ງ;
3) ສ້າງ ແລະ ປັບປຸງນິຕິກໍາລຸ່ມກົດໝາຍ.

### 3.3.2. ແຜນງານສົ່ງເສີມ ແລະ ພັດທະນາ ຫັດຖະກໍາ

**ກ. ນະໂຍບາຍລວມ**

ສຸມໃສ່ສົ່ງເສີມ ແລະ ພັດທະນາຜະລິດຕະພັນຫັດຖະກໍາລາວ ທີ່ມີທ່າແຮງ, ເປັນມູນເຊື້ອດ້ານພູມປັນຍາ ແລະ ເອກະລັກສະເພາະຂອງແຕ່ລະທ້ອງຖິ່ນ ໃຫ້ມີການຜະລິດເປັນສິນຄ້າ ແລະ ການສ້າງມູນຄ່າເພີ່ມ ເພື່ອສົ່ງເສີມດ້ານການຜະລິດໃຫ້ມີສິນຄ້າຫັດຖະກໍາຫຼາຍປະເພດ ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດພາຍໃນ ແລະ ຕະຫຼາດຕ່າງປະເທດ ໂດຍເອົາການເຊື່ອມໂຍງກັບການທ່ອງທ່ຽວເປັນຕ່ອງໂສ້ແຫ່ງຜົນສໍາເລັດ. ສິ່ງສໍາຄັນຕ້ອງໄດ້

ເອົາໃຈໃສ່ສ້າງຄວາມເຂັ້ມແຂງດ້ານການພັດທະນາຊັບພະຍາກອນມະນຸດ ໃຫ້ແກ່ຊາວຊ່າງຫັດຖະກຳ ໃຫ້ມີຄວາມຮູ້ ແລະ ສີມືແຮງງານ ທາງດ້ານການອອກແບບຜະລິດຕະພັນໃຫ້ມີຄວາມສວຍງາມ, ມີຄວາມປານີດ ພ້ອມທັງໃຫ້ຮັບປະກັນໄດ້ທາງດ້ານຈຳນວນປະລິມານ ແລະ ຄຸນນະພາບ. ພ້ອມນັ້ນ ຕ້ອງໄດ້ສ້າງລະບົບເຕັກໂນໂລຊີຂໍ້ມູນຂ່າວສານ (IT) ແລະ ການຈັດຝຶກອົບຮົມເພື່ອຍົກລະດັບດ້ານການບໍລິຫານ-ຈັດການ ແລະ ການປະຊາສຳພັນສິນຄ້າຫັດຖະກຳ ໃຫ້ແກ່ນັກທ່ອງທ່ຽວ ເປັນຕົ້ນ ຜະລິດຕະພັນແຜ່ນແພໄໝລາວ ທີ່ໄດ້ຈາກການຕ່ຳຫູກ ແລະ ການຍ້ອມສີທຳມະຊາດ, ການຈັກສານຫວາຍ-ໄມ້ປ່ອງ, ການແກະສະຫຼັກໄມ້ ແລະ ຜະລິດຕະພັນອື່ນໆ ເພື່ອສົ່ງເສີມການສ້າງວຽກເຮັດງານທຳ, ການສ້າງອາຊີບ ແລະ ສ້າງລາຍຮັບໃຫ້ແກ່ຊາວຊ່າງຫັດຖະກຳ ໄດ້ມີຊີວິດການເປັນຢູ່ດີຂຶ້ນ.

**ຂ. ການສົ່ງເສີມ ແລະ ພັດທະນາຫັດຖະກຳ**

ການສົ່ງເສີມ ແລະ ພັດທະນາຫັດຖະກຳ ແມ່ນອີງໃສ່ທ່າແຮງ, ມູນເຊື້ອ, ວິຖີຊີວິດ ແລະ ເອກະລັກຂອງທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 ແລະ ແຜນພັດທະນາອຸດສາຫະກຳ ແລະ ການຄ້າ ປີ 2016-2020 ເພື່ອສົ່ງເສີມການຜະລິດຫັດຖະກຳທີ່ເປັນພູມປັນຍາທ້ອງຖິ່ນໃຫ້ເປັນສິນຄ້າ ແລະ ສ້າງວຽກເຮັດງານທຳໃຫ້ປະຊາຊົນບັນດາເຜົ່າ ຊຶ່ງປະກອບມີ 2 ວຽກງານ ທີ່ຈະຈັດຕັ້ງປະຕິບັດ ຄື:

1) ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານສົ່ງເສີມ ແລະ ພັດທະນາຫັດຖະກຳ;
2) ສົ່ງເສີມການຜະລິດຫັດຖະກຳທີ່ຕິດພັນກັບການທ່ອງທ່ຽວ.

**1) ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານສົ່ງເສີມ ແລະ ພັດທະນາຫັດຖະກຳ**

ສ້າງຄວາມເຂັ້ມແຂງໃນການສົ່ງເສີມ ແລະ ພັດທະນາຫັດຖະກຳລາວ ດ້ວຍການຍົກລະດັບຄວາມຮູ້ວິຊາການ ໃຫ້ແກ່ພະນັກງານພາກລັດ ແລະ ພັດທະນາສີມືແຮງງານ ໃຫ້ແກ່ພາກທຸລະກິດ, ຊາວຊ່າງຫັດຖະກຳ ແລະ ສະມາຄົມຫັດຖະກຳລາວ ເພື່ອພັດທະນາສີມືການຜະລິດຫັດຖະກຳ ໃຫ້ເປັນສິນຄ້າ ມີຄວາມຫຼາກຫຼາຍ ແລະ ປານີດ ຕອບສະໜອງຄວາມຕ້ອງການຂອງຕະຫຼາດ. ສ້າງກົນໄກປະສານງານ, ການຮ່ວມມື ແລະ ແລກປ່ຽນບົດຮຽນທັງພາຍໃນ ແລະ ຕ່າງປະເທດ. ສ້າງຕັ້ງສູນຫັດຖະກຳ, ຊຸກຍູ້ສົ່ງເສີມການສ້າງຕັ້ງກຸ່ມ ຫຼື ສະມາຄົມຫັດຖະກຳ ແລະ ກຸ່ມຫັດຖະກຳຕົວແບບ ເປັນຫົວໜ່ວຍການຜະລິດຮາກຖານ ເພື່ອປະກອບສ່ວນພັດທະນາວຽກງານຫັດຖະກຳ ແຕ່ລະໄລຍະ.

ການປະຕິບັດແຜນງານສ້າງຄວາມເຂັ້ມແຂງ ປະກອບດ້ວຍ 3 ວຽກງານຍ່ອຍ ຄື:

1) ຍົກລະດັບສີມືແຮງງານ ແລະ ສ້າງວິຊາຊີບດ້ານຫັດຖະກຳ;
2) ສ້າງສູນສົ່ງເສີມຫັດຖະກຳຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້;
3) ສົ່ງເສີມການສ້າງຕັ້ງກຸ່ມຫັດຖະກຳຕົວແບບ

**2) ສົ່ງເສີມ ແລະ ພັດທະນາຜະລິດຕະພັນຫັດຖະກຳ ທີ່ຕິດພັນກັບການທ່ອງທ່ຽວ**

ການສົ່ງເສີມການຜະລິດຫັດຖະກຳ ທີ່ຕິດພັນກັບການທ່ອງທ່ຽວ ແມ່ນມີຄວາມສຳຄັນຫຼາຍ ໃນການສ້າງລາຍຮັບ ແລະ ຫຼຸດຜ່ອນຄວາມທຸກຍາກ ໃຫ້ແກ່ປະຊາຊົນບັນດາເຜົ່າ ເປັນຕົ້ນ ກຸ່ມຜະລິດແຜ່ນແພ ແລະ ຍ້ອມສີທຳມະຊາດ, ກຸ່ມຫັດຖະກຳຈັກສານ, ກຸ່ມແກະສະຫຼັກ ແລະ ຜະລິດເຄື່ອງທີ່ລະນຶກ ລວມທັງປະຊາຊົນທົ່ວໄປ ໂດຍການສົ່ງເສີມໃຫ້

ກຸ່ມຜູ້ຜະລິດໃນຊຸມຊົນ ມີການອອກແບບ ທີ່ເປັນຄວາມຄິດສ້າງສັນ, ໂດດເດັ່ນ, ສວຍງາມ ທີ່ສະແດງໃຫ້ເຫັນເອກະລັກ ແລະ ວັດທະນະທຳຂອງແຕ່ລະທ້ອງຖິ່ນ ເພື່ອຈຳໜ່າຍໃຫ້ແກ່ນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ.

ແຜນງານສົ່ງເສີມ ແລະ ພັດທະນາຜະລິດຕະພັນຫັດຖະກຳ ໃຫ້ເຊື່ອມໂຍງກັບການທ່ອງທ່ຽວ ປະກອບດ້ວຍ 3 ວຽກງານຍ່ອຍດັ່ງນີ້:

1) ໃຫ້ຄຳປຶກສາ ແລະ ແນະນຳກ່ຽວກັບການອອກແບບຜະລິດຕະພັນ ໃຫ້ແກ່ຊາວຊ່າງ ແລະ ກຸ່ມຜູ້ຜະລິດ;
2) ສ້າງຊຸມຊົນຫັດຖະກຳ, ສົ່ງເສີມຫັດຖະກຳທີ່ຕິດພັນກັບວັດຖະນະທຳແບບດັ້ງເດີມ ເພື່ອການທ່ອງທ່ຽວ;
3) ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງເພື່ອປັບປຸງສະຖານທີ່ຂາຍເຄື່ອງຫັດຖະກຳ ໃນເຂດແຫຼ່ງທ່ອງທ່ຽວ.

## 4. ໝາກຜົນ ແລະ ຕົວຊີ້ວັດ

ໝາກຜົນ ແລະ ຕົວຊີ້ວັດການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຮອດປີ 2020 ໄດ້ຄາດຄະເນໄວ້ ດັ່ງນີ້:

### 4.1 ດ້ານອຸດສາຫະກຳປຸງແຕ່ງ

| ລ/ດ | ວຽກງານ | ໝາກຜົນ | ຕົວຊີ້ວັດ |
|---|---|---|---|
| 1 | ສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງຂະແໜງ ຍ່ອຍ | • ການລົງທຶນໃນຂະແໜງອຸດສາຫະກຳປຸງແຕ່ງ ໄດ້ຮັບການສົ່ງເສີມຕາມທ່າແຮງ<br>• ອຸດສາຫະກຳທີ່ມີທ່າແຮງ ໂດຍສະເພາະ 4 ອຸດສາຫະກຳຍ່ອຍທີ່ເປັນເປົ້າໝາຍ ໄດ້ຮັບການສົ່ງເສີມຢ່າງມີຈຸດສຸມ<br>• ອຸດສາຫະກຳເກີດໃໝ່ມີອັດຕາຂະຫຍາຍຕົວ | • ສຳເລັດການສ້າງແຜນພັດທະນາອຸດສາຫະກຳຍ່ອຍ ຢ່າງໜ້ອຍ 4 ຂະແໜງ ອຸດສາຫະກຳປຸງແຕ່ງກະສິກຳ-ອາຫານ (ໂຮງສີເຂົ້າ, ແປ້ງສາລີ, ຢາງພາລາ ແລະ ແປ້ງມັນຕົ້ນ), ອຸດສາຫະກຳແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ, ອຸດສາຫະກຳຊີມັງ ແລະ ອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່<br>• ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງໃນກຸ່ມອຸດສາຫະກຳທີ່ມີທ່າແຮງ 4 ອຸດສາຫະກຳຍ່ອຍເພີ່ມຂຶ້ນສະເລ່ຍບໍ່ຕ່ຳກວ່າ 15% ຕໍ່ປີ |
| 2 | ພັດທະນາພື້ນຖານໂຄງລ່າງ ແລະ ສ້າງສະພາບແວດລ້ອມເອື້ອອຳນວຍ | • ພື້ນຖານໂຄງລ່າງອຸດສາຫະກຳປຸງແຕ່ງ ໄດ້ຮັບການສຶກສາເພື່ອຍົກລະດັບ<br>• ສະພາບແວດລ້ອມການດຳເນີນທຸລະກິດໄດ້ຮັບການປັບປຸງ<br>• ມີລະບຽບສົ່ງເສີມ ແລະ ຄຸ້ມຄອງຄວາມຄວາມຮຽກຮ້ອງຕ້ອງການຂອງຜູ້ລົງທຶນດ້ານອຸດສາຫະກຳປຸງແຕ່ງ | • ສຶກສາຄວາມເໝາະສົມໃນການພັດທະນາເຂດ-ນິຄົມອຸດສາຫະກຳ ຢ່າງໜ້ອຍ 2 ແຫ່ງ<br>• ພັດທະນານິຄົມອຸດສາຫະກຳໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງ<br>• ເວລາໃນການອອກອະນຸຍາດດຳເນີນທຸລະກິດປະຕິບັດໄດ້ພາຍໃນ 10 ວັນ (ເລີ່ມແຕ່ປີ 2019 ເປັນຕົ້ນໄປ).<br>• ສຳເລັດ ການສ້າງນິຕິກຳ ລຸ່ມກົດໝາຍ 7 ສະບັບ |

### 4.2 ດ້ານຫັດຖະກຳ

| | ວຽກງານ | ໝາກຜົນ | ຕົວຊີ້ວັດ |
|---|---|---|---|
| 1 | ສ້າງຄວາມເຂັ້ມແຂງໃນການສົ່ງເສີມ ແລະ ພັດທະນາຫັດຖະກຳ | • ສີມືແຮງງານຜູ້ປະກອບການຫັດຖະກຳໄດ້ຮັບການພັດທະນາ ແລະ ຍົກລະດັບ<br>• ກຸ່ມ ແລະ ສູນຫັດຖະກຳໄດ້ຮັບການສ້າງຕັ້ງ ແລະ ສົ່ງເສີມ | • ຈຳນວນຫົວໜ່ວຍຜູ້ປະກອບການຫັດຖະກຳທີ່ໄດ້ຮັບການພັດທະນາ ແລະ ຍົກລະດັບດ້ານສີມືແຮງງານຢ່າງໜ້ອຍ 15 ຫົວໜ່ວຍ.<br>• ສ້າງກຸ່ມຫັດຖະກຳໄດ້ 5 ກຸ່ມ. |
| 2 | ສົ່ງເສີມ ແລະ ພັດທະນາຜະລິດຕະພັນຫັດຖະກຳ ທີ່ຕິດພັນກັບການທ່ອງທ່ຽວ | • ມີຊຸມຊົນການທ່ອງທ່ຽວຫັດຖະກຳແບບດັ້ງເດີມ ແລະ ປະຍຸກເກີດຂຶ້ນ.<br>• ມີສະຖານທີ່ຂາຍເຄື່ອງຫັດຖະກຳໃນແຫລ່ງທອງທ່ຽວເພີ່ມຂຶ້ນ.<br>• ສິນຄ້າຫັດຖະກຳ ທີ່ຕອບສະ ໜອງ ການທ່ອງທ່ຽວ ມີຄວາມຫຼາກຫຼາຍ. | • ຊຸມຊົນຫັດຖະກຳເກີດຂຶ້ນໃໝ່ຈຳນວນ 2 ແຫ່ງ.<br>• ນັກທ່ອງທ່ຽວຊື້ສິນຄ້າຫັດຖະກຳບໍ່ຕ່ຳກວ່າ 30% ຂອງຈຳນວນນັກທ່ອງທ່ຽວ. |

## 5. ມາດຕະການຈັດຕັ້ງປະຕິບັດ ແລະ ປະເມີນຜົນ

### 5.1 ມາດຕະການຈັດຕັ້ງປະຕິບັດ

1) ເພື່ອເຮັດໃຫ້ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ ແລະ ໄດ້ຮັບຜົນສຳເລັດສູງ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະຕ້ອງໄດ້ເຜີຍແຜ່ແຜນພັດທະນາສະບັບນີ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອເປັນເອກະພາບກັນ ແລະ ຮ່ວມມືກັນ ໃນການຈັດຕັ້ງປະຕິບັດ.

2) ຂະແໜງການກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ຕ້ອງບັນຈຸເອົາແຜນດັ່ງກ່າວເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມຂອງຕົນ ພ້ອມທັງຈັດສັນງົບປະມານທີ່ເໝາະສົມ ໃນການຈັດຕັ້ງປະຕິບັດແຕ່ລະໂຄງການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ກ່ຽວພັນກັບພາລະບົດບາດຂອງຕົນ.

3) ເພີ່ມທະວີການປະສານງານ ແລະ ການເປັນເຈົ້າການຂອງອົງການຈັດຕັ້ງລັດ ແລະ ພາກທຸລະກິດ ເພື່ອຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ເປັນຕົ້ນ ການສະໜອງທຶນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການສົ່ງເສີມວິຊາການ, ແຮງງານ, ການຕະຫຼາດ ແລະ ອື່ນໆ.

4) ສ້າງ ແລະ ປັບປຸງບັນດາລະບຽບການ ເພື່ອກຳນົດຫຼັກການ, ວິທີການ ແລະ ມາດຕະການ ໃຫ້ລະອຽດ ແນໃສ່ເຮັດໃຫ້ກົນໄກການປະສານງານ ແລະ ລະບົບການຈັດຕັ້ງໃຫ້ມີປະສິດທິພາບ. ກຳນົດນະໂຍບາຍທີ່ເປັນບູລິມະສິດໃຫ້ແກ່ການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີຄວາມລະອຽດ ແລະ ສາມາດຈັດຕັ້ງປະຕິບັດໄດ້.

5) ຜັນຂະຫຍາຍບັນດານະໂຍບາຍດັ່ງກ່າວອອກເປັນແຜນງານ, ໂຄງການລະອຽດ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຮ່ວມມືກັນໃນການຈັດຕັ້ງປະຕິບັດ, ໃຫ້ບຸລິມະສິດດ້ານຕ່າງໆ ແກ່ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ເປັນຍຸດທະສາດລັດຖະບານ ເປັນຕົ້ນ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ປະກອບສ່ວນລົບລ້າງ

ຄວາມທຸກຍາກ, ການແກ້ໄຂວຽກເຮັດງານທຳ, ການອະນຸລັກວິຊາຊີບ ທີ່ເປັນມູນເຊື້ອຂອງຊາດ, ການແກ້ໄຂບັນຫາສັງຄົມ, ອຸດສາຫະກຳສີຂຽວ ແລະ ອື່ນໆ.

6) ການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕິດພັນກັບກິດຈະການຕ່າງໆເປັນຕົ້ນ ການພັດທະນາພື້ນຖານໂຄງລ່າງ, ບຸກຄະລາກອນ, ການຜະລິດ, ການບໍລິຫານ, ການຕະຫຼາດ ແລະ ອື່ນໆ. ສະນັ້ນ, ຈຶ່ງຕ້ອງໄດ້ເຊື່ອມໂຍງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ ເພື່ອເຮັດໃຫ້ການພັດທະນາມີຄວາມສອດຄ່ອງກົມກຽວ ແລະ ຍືນຍົງ.

**5.2 ການຕິດຕາມປະເມີນຜົນ ແລະ ລາຍງານ**

ການຕິດຕາມປະເມີນຜົນ ແລະ ລາຍງານ ທີ່ມີປະສິດທິພາບ ແມ່ນມີຄວາມຈຳເປັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳສະບັບນີ້ ເພາະຈະຊ່ວຍໃຫ້ສາມາດເກັບກຳຂໍ້ມູນກ່ຽວກັບຄວາມຄືບໜ້າ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ເພື່ອລາຍງານຂັ້ນເທິງຊາບ ແລະ ໃຫ້ທິດຊີ້ນຳ ໃນການປັບປຸງແກ້ໄຂຢ່າງທັນການ. ການຕິດຕາມປະເມີນຜົນ ແມ່ນອີງໃສ່ຕົວຊີ້ວັດທີ່ໄດ້ກຳນົດໃນແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳສະບັບນີ້ ບວກກັບວິທີການທີ່ໄດ້ນຳໃຊ້ໃນການປະເມີນຜົນຕາມທີ່ເຄີຍຈັດຕັ້ງປະຕິບັດໃນໄລຍະຜ່ານມາ.

## 6. ງົບປະມານ

ເພື່ອເຮັດໃຫ້ບັນດາແຜນງານ ແລະໂຄງການ ທີ່ກຳນົດໄວ້ໃນແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳໄດ້ຮັບການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ ຕາມລະດັບຄາດໝາຍ ຈະນຳໃຊ້ງົບປະມານທັງໝົດ ປະມານ 36,44 ຕື້ກີບ ຫຼື ເທົ່າກັບ 4,19 ລ້ານໂດລາ. ໃນນີ້ ທຶນພາຍໃນ 19,76 ຕື້ກີບ ຫຼື ເທົ່າກັບ 2,27 ລ້ານໂດລາ ແລະ ທຶນຕ່າງປະເທດປະມານ 16,68 ຕື້ກີບ ຫຼື ເທົ່າກັບ 1,92 ລ້ານໂດລາ.

| 1 ແຜນພັດທະນາ | 1-1 ແຜນງານ | 1-1-1 ແຜນງານຍ່ອຍ | 1-1-1-1 ໂຄງການ | ລດ | ຊື່ໂຄງການຍ່ອຍ/ກິດຈະກຳ | ປີຈັດຕັ້ງປະຕິບັດ | ງົບປະມານ ແລະ ແຫຼ່ງທຶນ | | | ໜ່ວຍງານຮັບຜິດຊອບ |
|---|---|---|---|---|---|---|---|---|---|---|
| | | | | | | | ໂດລາ | ລ້ານກີບ | ແຫຼ່ງທຶນ | |
| 1. ແຜນງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ; | | | | | | | | | | |
| | 1-1. ສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ຕາມຂະແໜງການຍ່ອຍ | | | | | | | | | |
| | | 1-1-1 ສົ່ງເສີມ ແລະ ພັດທະນາກຸ່ມອຸດສາຫະກຳປຸງແຕ່ງກະສິກຳ-ອາຫານ | | | | | | | | |
| | | | | 1 | ປັບປຸງດັດສົມ ແລະ ຍົກລະດັບຄຸນນະພາບໂຮງງານຂ້າສັດ | 2019 | | 1,500 | ງົບປະມານລັດຖະບານ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ກະຊວງກະສິກຳ ແລະ ປ່າໄມ້ |
| | | | | 2 | ສົ່ງເສີມຄຸນນະພາບ ແລະ ຄວາມປອດໄພ ໃນອຸດສາຫະກຳປຸງແຕ່ງ ອາຫານ ແລະ ເຄື່ອງດື່ມ. | 2020 | 180,000 | 698 | ງົບປະມານລັດຖະບານ,<br>ທຶນຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ກະຊວງສາທາລະນະສຸກ<br>ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ<br>ກະຊວງກະສິກຳ ແລະ ປ່າໄມ້ |
| | | | | 3 | ປັບປຸງ ແລະ ຍົກລະດັບສະມັດຕະພາບໂຮງອົບ ແລະ ໂຮງສີສາລີໃນການຜະລິດເປັນສິນຄ້າ | 2020 | 220,000 | 1,760 | ງົບປະມານລັດຖະບານ,<br>ທຶນຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ກະຊວງກະສິກຳ ແລະ ປ່າໄມ້ |
| | | | | 4 | ປັບປຸງ ແລະ ຍົກລະດັບສະມັດຕະພາບໂຮງງານປຸ໋ຍ ແລະ ອາຫານສັດ | 2019-2020 | | 510 | ງົບປະມານລັດຖະບານ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ກະຊວງກະສິກຳ ແລະ ປ່າໄມ້ |
| | | | | 5 | ປັບປຸງ ແລະ ຍົກລະດັບສະມັດຕະພາບໂຮງສີເຂົ້າໃນການຜະລິດເປັນສິນຄ້າ | 2019-2020 | 50,000 | 1,200 | ງົບປະມານລັດຖະບານ,<br>ທຶນຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ກະຊວງກະສິກຳ ແລະ ປ່າໄມ້ |
| | | | | 6 | ຄົ້ນຄວ້າ ແລະ ສ້າງນະໂຍບາຍສົ່ງເສີມໂຮງສີເຂົ້າໃນການຜະລິດເປັນສິນຄ້າ | 2019-2020 | 30,000 | 300 | ງົບປະມານລັດຖະບານ,<br>ທຶນຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ກະຊວງກະສິກຳ ແລະ ປ່າໄມ້<br>ທະນາຄານໂລກ |
| | | | | 7 | ການສ້າງຍຸດທະສາດການພັດທະນາອຸດສາຫະກຳປຸງແຕ່ງກະສິກຳ (ຢາງພາລາ ແລະ ແປ້ງມັນຕົ້ນ) | 2019-2020 | 230,800 | 365 | ງົບປະມານລັດ, ທຶນຊ່ວຍເຫຼືອ<br>ຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ລັດຖະບານ ສປ ຈີນ |
| | | | | 8 | ໂຄງການຍົກລະດັບການບໍລິຫານຈັດການລະບົບຕ່ອງໂສ້ການຜະລິດ ແລະ ການຄ້າໄມ້ | 2019-2020 | 200,000 | | ທຶນຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ອົງການ WWF -Laos |
| | | | | 9 | ປັບປຸງ ແລະ ດັດສົມ ໂຮງງານປຸງແຕ່ງໄມ້ | 2019 | | 300 | ງົບປະມານລັດຖະບານ,<br>ທຶນຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| | | 1-1-2 ອຸດສາຫະກຳແຜ່ນແພ ແລະ ເຄື່ອງນຸ່ງຫົ່ມ | | | | | | | | |
| | | | | 1 | ຄົ້ນຄວ້າສ້າງຍຸດທະສາດສົ່ງເສີມອຸດສາຫະກຳແຜ່ນແພ-ຕັດຫຍິບ ແລະ ອຸດສາຫະກຳເຂັ້ມງານອື່ນໆ | 2019-2020 | | 380 | ງົບປະມານລັດຖະບານ,<br>ທຶນຊ່ວຍເຫຼືອຈາກຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ສະມາຄົມຕັດຫຍິບ<br>ສະຖາບັນຄົ້ນຄວ້າເສດຖະກິດອາຊຽນ ແລະ ອາຊີ<br>ຕາເວັນອອກ (ERIA) |
| | | 1-1-3 ອຸດສາຫະກຳ ວັດສະດຸກໍ່ສ້າງ | | | | | | | | |

| | | | | | | |
|---|---|---|---|---|---|---|
| 1 | ປັບປຸງ ແລະ ຍົກລະດັບຄຸນະພາບ ແລະ ມາດຕະຖານຜະລິດຕະພັນ ເຫຼັກ | 2019-2020 | | 300 | ງົບປະມານລັດຖະບານ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 2 | ສ້າງນະໂຍບາຍ ແລະ ກົນໄກການສົ່ງເສີມ ອຸດສາຫະກຳຊີມັງ | 2019-2020 | | 250 | ງົບປະມານລັດຖະບານ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 1-1-4 ອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່ | | | | | | |
| 1 | ສົ່ງເສີມ ອຸດສາຫະກຳສິ່ງພິມ ແລະ ການຫຸ້ມຫໍ່ສິນຄ້າ ເພື່ອສະໜັບສະໜູນການຜະລິດ | 2020 | | 289 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ<br>ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| 1-2. ພັດທະນາພື້ນຖານໂຄງລ່າງ ສຳລັບອຸດສາຫະກຳ ແລະ ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ | | | | | | |
| 1-2-1 ພັດທະນາພື້ນຖານໂຄງລ່າງ ສຳລັບອຸດສາຫະກຳ | | | | | | |
| 1 | ສຶກສາຄວາມເປັນໄປໄດ້ ໃນການ ພັດທະນາ ນິຄົມອຸດສາຫະກຳ ຕາມແລວທາງລົດໄຟລາວ-ຈີນ | 2020 | 245,000 | 220 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ກະຊວງໂຍທາທິການ ແລະ ຂົນສົ່ງ |
| 2 | ຂະຫຍາຍເນື້ອທີ່ນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ ໄລຍະ 2 | 2019-2020 | | 4,000 | ງົບປະມານລັດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 1-2-2. ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ອຸດສາຫະກຳປຸງແຕ່ງ | | | | | | |
| 1 | ສ້າງລະບົບເຕັກໂນໂລຊີຂໍ້ມູນຂ່າວສານຮັບໃຊ້ວຽກອຸດສາຫະກຳ (E-Industry) | 2019-2020 | 300,000 | 450 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 5 | ພັດທະນາ ແລະ ສ້າງຄວາມເຂັ້ມແຂງດ້ານສະຖິຕິອຸດສາຫະກຳປຸງແຕ່ງ | 2019-2020 | 42,000 | 3,500 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 1-2-3 ສ້າງ ແລະ ປັບປຸງ ນິຕິກຳລຸ່ມກົດໝາຍ | | | | | | |
| 1 | ສ້າງລະບຽບການກ່ຽວກັບການຄຸ້ມຄອງສິ້ນສ່ວນຍານພາຫະນະ ສຳລັບການຜະລິດ ແລະ ປະກອບລົດ ຢູ່ໃນ ໂຮງງານຢູ່ໃນ ສປປ ລາວ | 2019 | | 70 | ງົບປະມານລັດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 2 | ສ້າງລະບຽບການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມໄມ້ສົ້ນເຂົ້າ ແລະ ສົ້ນອອກ ໃນຂະບວນການປຸງແຕ່ງ ແລະ ການຄ້າ | 2019 | | 300 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 3 | ສ້າງລະບຽບການກ່ຽວກັບການຄຸ້ມຄອງການດຳເນີນທຸລະກິດປຸງແຕ່ງຢາງປລາສຕິກ | 2019 | | 150 | ງົບປະມານລັດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 4 | ປັບປຸງລະບຽບການກ່ຽວກັບມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ | 2020 | | 250 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 5 | ສ້າງຍຸດທະສາດ ແລະ ນິຕິກຳການພັດທະນາອຸດສາຫະກຳສີຂຽວ | 2019 | 70,000 | | ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| **2. ແຜນງານສົ່ງເສີມ ແລະ ພັດທະນາ ຫັດຖະກຳ.** | | | | | | |
| 2-1. ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານສົ່ງເສີມ ແລະ ພັດທະນາຫັດຖະກຳ | | | | | | |
| 1 | ຍົກລະດັບສີມືແຮງງານ ແລະ ສ້າງວິຊາຊີບດ້ານຫັດຖະກຳ | 2020 | 45,000 | 250 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ |
| 2 | ສຶກສາຄວາມເປັນໄປໄດ້ໃນການສ້າງສູນສົ່ງເສີມຫັດຖະກຳຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ | 2020 | | 320 | ງົບປະມານລັດ | |
| 3 | ສົ່ງເສີມການສ້າງຕັ້ງກຸ່ມຫັດຖະກຳຕົວແບບ | 2020 | 155,000 | 650 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ສະມາຄົມຫັດຖະກຳລາວ |

| | | | | | | |
|---|---|---|---|---|---|---|
| 2-2. ສົ່ງເສີມ ແລະ ພັດທະນາຜະລິດຕະພັນຫັດຖະກຳ ທີ່ຕິດພັນກັບການທ່ອງທ່ຽວ; | | | | | | |
| 1 | ໃຫ້ຄຳປຶກສາ ແລະ ແນະນຳ ກ່ຽວກັບ ການອອກແບບຜະລິດຕະພັນ ໃຫ້ແກ່ຊາວຊ່າງ ແລະ ກຸ່ມຜູ້ຜະລິດ; | 2020 | | 250 | ງົບປະມານລັດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ສະມາຄົມຫັດຖະກຳລາວ |
| 2 | ສ້າງຊຸມຊົນຫັດຖະກຳ, ສົ່ງເສີມຫັດຖະກຳທີ່ຕິດພັນກັບວັດທະນະທຳແບບດັ່ງເດີມເພື່ອການທ່ອງທ່ຽວ | 2020 | | 900 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ສະມາຄົມຫັດຖະກຳລາວ |
| 3 | ປັບປຸງຍົກລະດັບສະຖານທີ່ຂາຍເຄື່ອງຫັດຖະກຳ ໃນສະຖານທີ່ທ່ອງທ່ຽວ | 2020 | 150,000 | 600 | ງົບປະມານລັດ,<br>ທຶນຊ່ວຍເຫຼືອຕ່າງປະເທດ | ກະຊວງອຸດສາຫະກຳ ແລະ ການຄ້າ<br>ສະມາຄົມຫັດຖະກຳລາວ |
| **28** | **ລວມມູນຄ່າໂຄງການ** | | **1,917,800** | **19,762** | | |